ສາທາລະນະລັດ ປະຊາທິປະໄຕ ປະຊາຊົນລາວ

ສັນຕິພາບ ເອກະລາດ ປະຊາທິປະໄຕ ເອກະພາບ ວັດທະນະຖາວອນ

ກະຊວງອຸດສາຫະກຳ ແລະ ການຄ້າ

ເລກທີ 1951 /ອຄ.ຄພນ.

ນະຄອນຫຼວງວຽງຈັນ, ວັນທີ 23 SEP 2015

## ແຈ້ງການ

ເຖິງ: ສະມາຄົມນ້ຳມັນເຊື້ອໄຟ ແລະ ອາຍແກັສ.

ເລື່ອງ: ປັບລົງລາຄາຂາຍຍ່ອຍ ນ້ຳມັນແອັດຊັງ ແລະ ນ້ຳມັນກາຊວນໃນຂອບເຂດທົ່ວປະເທດ.

- ອີງຕາມ ແຈ້ງການຂອງຫ້ອງວ່າການລັດຖະບານ ເລກທີ 109/ຫລບ.ກລຂ, ລົງວັນທີ 19/01/2015.
- ອີງຕາມ ແຈ້ງການຂອງຫ້ອງວ່າການລັດຖະບານ ເລກທີ 1519/ຫລບ.ກລຂ, ລົງວັນທີ 29/10/2014.
- ອີງຕາມ ມາດຕາ 20 ຂອງກົດໝາຍສ່ວຍສາອາກອນສະບັບປັບປຸງໃໝ່, ເລກທີ 05/ສພຊ, ລົງວັນທີ 20/12/2011.
- ອີງຕາມ ສະພາບລາຄາຊື້-ຂາຍນ້ຳມັນເຊື້ອໄຟຢູ່ຕະຫຼາດໂລກໃນປະຈຸບັນໄດ້ມີການປ່ຽນແປງ ແລະ ເພື່ອໃຫ້ສອດຄ່ອງກັບກົນໄກຕະຫຼາດ.

ກະຊວງອຸດສາຫະກຳ ແລະ ການຄ້າ, ຂໍແຈ້ງມາຍັງບັນດາບໍລິສັດນ້ຳມັນເຊື້ອໄຟ ໃຫ້ປັບລາຄາຂາຍຍ່ອຍນ້ຳມັນເຊື້ອໄຟໜ້າປ້ຳ ດັ່ງນີ້:

ຫົວໜ່ວຍ: ກີບ/ລິດ.

| ລ/ດ | ລາຍການ | ແອັດຊັງພິເສດ | ແອັດຊັງທຳມະດາ | ກາຊວນ |
|---|---|---|---|---|
| 1 | ນະຄອນຫຼວງວຽງຈັນ | **8,940** | **7,820** | **6,450** |
| 2 | ແຂວງຄຳມ່ວນ | **8,970** | **7,850** | **6,480** |
| 3 | ແຂວງສະຫວັນນະເຂດ | **8,980** | **7,860** | **6,490** |
| 4 | ແຂວງຈຳປາສັກ | **9,000** | **7,880** | **6,510** |
| 5 | ແຂວງບໍ່ແກ້ວ | **9,050** | **7,920** | **6,550** |
| 6 | ແຂວງຊຽງຂວາງ | | **8,020** | **6,650** |

- ລາຄາໃໝ່ນີ້ ໃຫ້ເລີ່ມປະຕິບັດ ວັນທີ 25/09/2015 , ເວລາ 06 : 00 ໂມງ ໃນຂອບເຂດທົ່ວປະເທດ;
- ໃຫ້ບັນດາບໍລິສັດປະຕິບັດຕາມເນື້ອໃນ ຂ້າງເທິງນີ້ ຢ່າງເຂັ້ມງວດ ແລະ ຄຸ້ມຄອງປ້ຳຂາຍຍ່ອຍຂອງຕົນໃຫ້ບໍລິການຢ່າງເປັນປົກກະຕິ;

- ສ່ວນການຄິດໄລ່ເສັ້ນພາສີ, ອາກອນຊົມໃຊ້, ອາກອນມູນຄ່າເພີ່ມ(ອມພ), ກອງທຶນທາງ, ຄັງແຮ ແລະ ກຳໄລຈາກຄ່າບໍລິການປ້ຳຂາຍຍ່ອຍ ແມ່ນໃຫ້ພາກສ່ວນກ່ຽວຂ້ອງຄິດໄລ່ເກັບຕາມໂຄງສ້າງທີ່ໄດ້ກຳນົດໄວ້ໃນໂຄງສ້າງລາຄານ້ຳມັນເຊື້ອໄຟຂອງຈຸດຕ່າງໆ ຕາມແຈ້ງການສະບັບນີ້ ຈົນກວ່າຈະມີການປ່ຽນແປງ;
- ແຈ້ງການສະບັບນີ້ ປ່ຽນແທນແຈ້ງການສະບັບເລກທີ 1680/ອຄ.ຄພນ, ລົງວັນທີ 24/08/2015.

* ໝາຍເຫດ:

ສ່ວນຈຸດອື່ນໆ ແມ່ນໃຫ້ຄິດໄລ່ຄ່າຂົນສົ່ງ ແລ້ວບວກເຂົ້າຄືປະຕິບັດຜ່ານມາຢ່າງເພາະສົມແລ້ວໃຫ້ບໍລິສັດລາຍງານໃຫ້ກົມການຄ້າພາຍໃນຊາບດ້ວຍ.

ດັ່ງນັ້ນ, ຈິ່ງແຈ້ງມາຍັງທ່ານ ເພື່ອຊາບ ແລະ ຈັດຕັ້ງປະຕິບັດ ຢ່າງເຂັ້ມງວດ.

ລັດຖະມົນຕີວ່າການ ກະຊວງອຸດສາຫະກຳ ແລະ ການຄ້າ

ບຸນມີ ມະນີວົງ

ບ່ອນສົ່ງ

- ຫ້ອງວ່າການສູນກາງພັກ (ໃຊ້ຕາງລາຍງານ)
- ຫ້ອງວ່າການລັດຖະບານ (ໃຊ້ຕາງລາຍງານ)
- ຫ້ອງການ ກະຊວງການເງິນ (ເພື່ອຊາບ)
- ທ່ານຜູ້ວ່າການທະນາຄານແຫ່ງ ສປປ ລາວ (ເພື່ອຊາບ)
- ກົມພາສີ, ກົມສ່ວຍສາອາກອນ, ກົມນະໂຍບາຍການເງິນແລະ ກົມງົບປະມານ ກະຊວງການເງິນ (ເພື່ອຊາບ ແລະ ໃຫ້ຄວາມຮ່ວມມື)
- ກອງທຶນບູລະນະທາງຫຼວງ, ກະຊວງ ໂຍທາທິການ ແລະຂົນສົ່ງ (ເພື່ອຊາບ)
- ກົມຂົນສົ່ງ, ກະຊວງ ໂຍທາທິການ ແລະຂົນສົ່ງ (ເພື່ອຊາບ)
- ບັນດາກົມທີ່ກ່ຽວຂ້ອງອ້ອມຂ້າງກະຊວງ ອຄ (ເພື່ອຊາບ ແລະຕິດຕາມ)
- ພະແນກອຸດສາຫະກຳ ແລະ ການຄ້າແຂວງ, ນະຄອນຫຼວງ ທົ່ວປະເທດ (ເພື່ອຊາບ ແລະ ຕິດຕາມ)